ຮຽນ:

ອີງໃສ່:

ເລື່ອງ: **ທາງເຂດການສຶກສາບໍ່ຄິດດຳເນີນການ:** *[ໃຫ້ໝາຍກາກະບາດທຸກຫ້ອງທີ່ເໝາະສົມ.]*

☐ ພິຈາລະນາລົງຄຳເຫັນວ່ານັກຮຽນບໍ່ມີສິດ

☐ ປະຕິເສດຄຳຮ້ອງຂໍຮັບບໍລິການຕ່າງໆ

☐ ອື່ນໆ: ________________________________________

*[ກະລຸນາລະບຸ.]*

ວັນທີແຈ້ງ:

---

ເມື່ອບໍ່ດົນມານີ້, ທາງເຂດການສຶກສາໄດ້ປຶກສາຫາລືກັບທ່ານກ່ຽວກັບນັກຮຽນຜູ້ນີ້. ຂະນະນີ້ເຮົາຂຽນຈົດໝາຍມາຮຽນໃຫ້ທ່ານຊາບວ່າເຮົາຈະບໍ່ດຳເນີນການຕາມຄຳຮ້ອງຂໍຂອງທ່ານ. ເຮົາໄດ້ອະທິບາຍເຫດຜົນການປະຕິເສດໃນໜ້າທີສອງຂອງບັນທຶກນີ້.

ຕາມທີ່ທ່ານຊາບຢູ່ແລ້ວ, ກົດລະບຽບຕ່າງໆທີ່ວ່າດ້ວຍການສຶກສາພິເສດໄດ້ກຳນົດໃຫ້ທ່ານແລະລູກຂອງທ່ານໄດ້ຮັບການປ້ອງກັນ. ທ່ານຈະເຫັນລາຍລະອຽດຕ່າງໆກ່ຽວກັບສິດທິທາງກົດໝາຍຂອງທ່ານໃນປຶ້ມນ້ອຍ *ສິດທິຂອງພໍ່ແມ່ນັກຮຽນ (Parents' Rights Brochure)* ທີ່ແນບມາພ້ອມນີ້, ລວມທັງແຫລ່ງຕ່າງໆທີ່ທ່ານສາມາດຕິດຕໍ່ໄດ້ເພື່ອຈະໄດ້ຮັບຄວາມຊ່ວຍເຫລືອໃນການເຂົ້າໃຈເລື່ອງສິດທິຕ່າງໆຂອງທ່ານ. ທ່ານຄວນທົບທວນປຶ້ມນີ້ຢ່າງລະອຽດຖີ່ຖ້ວນພ້ອມກັບເອກະສານຕ່າງໆທີ່ໄດ້ແນບມາ.

ພະນັກງານຂອງເຂດການສຶກສາພ້ອມສເມີທີ່ຈະເວົ້າກັບທ່ານຫລືພົບທ່ານເພື່ອປຶກສາຫາລືກັນກ່ຽວກັບສິດທິຂອງທ່ານແລະກ່ຽວກັບການປະຕິເສດທີ່ຈະດຳເນີນການຂອງເຂດການສຶກສາ. ຂໍທ່ານຈົ່ງໂທມາຫາໃນກໍລະນີທີ່ທ່ານມີຂໍ້ຂ້ອງໃຈໃດໆ. ກະລຸນາຕິດຕໍ່ເຮົາໂດຍຜ່ານພະນັກງານຂອງເຂດການສຶກສາທີ່ໄດ້ລະບຸຊື່ຂ້າງລຸ່ມນີ້. ຂໍຂອບໃຈ.

**ພະນັກງານຂອງເຂດການສຶກສາທີ່ຕ້ອງຕິດຕໍ່:**

**ລາຍລະອຽດໃນການຕິດຕໍ່:**

ສິ່ງທີ່ແນບຕິດ:

☒ *ປຶ້ມນ້ອຍສິດທິຂອງພໍ່ແມ່ນັກຮຽນ (Parents' Rights Brochure)*

☐ ອື່ນໆ:

ອີງໃສ່ :                                                                                    ວັນທີແຈ້ງ:

***ຄຳແນະນຳສຳລັບພະນັກງານຂອງໂຮງຮຽນ:***

*ຈະຕ້ອງສົ່ງຄຳແຈ້ງສະບັບນີ້ໄປໃຫ້ພໍ່ແມ່ນັກຮຽນໃນພາສາກຳເນີດຂອງເຂົາຫລືໂດຍການສື່ສານໃນພາສາທີ່ພໍ່ແມ່ໃຊ້ຢູ່. ທາງເຂດການສຶກສາຈະຕ້ອງແນ່ໃຈວ່າພໍ່ແມ່ນັກຮຽນເຂົ້າໃຈຂໍ້ຄວາມໃນຄຳແຈ້ງສະບັບນີ້. (ກົດລະບຽບຂອງຣັຖບານກາງ §300.503)*

*ໃຫ້ອະທິບາຍການປະຕິເສດການຕັ້ງຕົ້ນຫລືປ່ຽນແປງໃດຂອງການກຳນົດ, ການປະເມີນ, ການກຳນົດບ່ອນຮຽນຫລືການບໍລິການການສຶກສາພິເສດ, ໂດຍການຕອບຄຳຖາມຕໍ່ໄປນີ້:*

1. *ເຂດການສຶກສາປະຕິເສດການດຳເນີນງານໃດ?*
2. *ເປັນຫຍັງເຂດການສຶກສາຈຶ່ງປະຕິເສດການດຳເນີນການ?*
3. *ໄດ້ມີການພິຈາລະນາແລະປະຕິເສດຂໍ້ສເນີໃດແນ່, ແລະເປັນຫຍັງຂໍ້ສເນີແຕ່ລະຂໍ້ນັ້ນຈຶ່ງໄດ້ຖືກປະຕິເສດ?*
4. *ໄດ້ມີວິທີການປະເມີນ, ການກວດສອບ, ການບັນທຶກຫລືການລາຍງານໃດທີ່ໄດ້ໃຊ້ເປັນເຫດຜົນເພື່ອປະຕິເສດການດຳເນີນການ?*
5. *ມີຫຍັງອີກແນ່ທີ່ໄດ້ມີຜົນຕໍ່ການຕັດສິນໃຈຂອງເຂດການສຶກສາ?*
6. *ຖ້າມີ, ຂັ້ນຕອນໃດທີ່ສເນີໃຫ້ດຳເນີນການຕໍ່ໄປ?*

---

## ບົດຄວາມອະທິບາຍການປະຕິເສດການດຳເນີນການຂອງເຂດການສຶກສາ